# ຊົມເຊີຍກອງປະຊຸມສະຫຼຸບວຽກງານປະຈຳປີ 2021 ແລະ ແຜນທຸລະກິດປະຈຳປີ 2022 ຂອງ ທຄຕລ

### ທີ່ ນະຄອນຫຼວງວຽງຈັນ, ວັນທີ 24 ທັນວາ 2021

ໃນວັນສຸກ ວັນທີ 24/12/2021 ທີ່ຜ່ານມາ, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໄດ້ຈັດກອງປະຊຸມສະຫຼຸບວຽກງານປະຈຳປີ 2021 ແລະ ແຜນທຸລະກິດປະຈຳປີ 2022 ຂອງ ທຄຕລ ຢູ່ທີ່ສະໂມສອນໃຫຍ່ ສະຖາບັນການທະນາຄານ ໂດຍການເປັນປະທານຂອງ **ທ່ານ ຄຳພຸດ ສິດທິລາດ ຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**, ພາຍໃຕ້ການເຂົ້າຮ່ວມຂອງ ຄະນະອຳນວຍການ, ຄະນະພະແນກ, ສູນ ແລະ ສາຂາ ຂອງ ທຄຕລ ທົ່ວລະບົບ.






